ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 248 /ລບ

ນະຄອນຫຼວງວຽງຈັນ, ວັນທີ 26.07.2016.

# ດຳລັດ
# ວ່າດ້ວຍທຸລະກິດຊວດຈຳ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015 ;
- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະນອກສັນຍາ ສະບັບເລກທີ 01/ສພຊ, ລົງວັນທີ 08 ທັນວາ 2008;
- ອີງຕາມກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ສະບັບເລກທີ 06/ສພຊ, ລົງວັນທີ 20 ພຶດສະພາ 2005;
- ອີງຕາມໜັງສືສະເໜີ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ128/ທຫລ ລົງວັນທີ 26 ເມສາ 2016.

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການກ່ຽວກັບການສ້າງຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະການຕິດຕາມ ການກວດກາ ທຸລະກິດຊວດຈຳ ເພື່ອເຮັດໃຫ້ການດຳເນີນທຸລະກິດຊວດຈຳ ເປັນລະບົບ ແລະ ຖືກຕ້ອງຕາມກົດໝາຍ ແລະລະບຽບການ ແນໃສ່ແກ້ໄຂຄວາມຫຍຸ້ງຍາກທາງດ້ານ

ການເງິນຂອງປະຊາຊົນ ລວມທັງຮັບປະກັນການໃຊ້ແທນໜີ້ສິນ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວຽກງານ ການຄຸ້ມຄອງສະຖາບັນການເງິນ ໃຫ້ມີປະສິດທິຜົນ.

**ມາດຕາ 2 ທຸລະກິດຊວດຈຳ**

ທຸລະກິດຊວດຈຳ ແມ່ນຫົວໜ່ວຍທຸລະກິດໜຶ່ງ ທີ່ໃຫ້ບໍລິການດ້ານສິນເຊື່ອ ດ້ວຍການຮັບຊວດຈຳສັງຫາລິມະຊັບ ຊຶ່ງສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ, ລະບຽບການ ແລະດຳລັດສະບັບນີ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຊວດຈຳ** ໝາຍເຖິງ ການນຳເອົາສັງຫາລິມະຊັບ ທີ່ຢູ່ໃນການຄຸ້ມຄອງ ຂອງຜູ້ຊວດຈຳ ໄປໄວ້ນຳຜູ້ຮັບຊວດຈຳ ເພື່ອຄ້ຳປະກັນການໃຊ້ແທນໜີ້ສິນ;
2. **ຊັບຊວດຈຳ** ໝາຍເຖິງ ສັງຫາລິມະຊັບ ທີ່ຜູ້ຊວດຈຳ ນຳໄປໄວ້ໃນການຄຸ້ມຄອງ ຂອງຜູ້ຮັບຊວດຈຳ ຊຶ່ງປະກອບດ້ວຍ ເຄື່ອງປະດັບ, ເຄື່ອງນຸ່ງຫົ່ມ, ເຄື່ອງໃຊ້ໃນເຮືອນ, ຍານພາຫະນະ, ເຄື່ອງເອເລັກໂຕຣນິກ ແລະຊັບສິ່ງຂອງອື່ນ ທີ່ເປັນສັງຫາລິມະຊັບ;
3. **ຜູ້ຮັບຊວດຈຳ** ໝາຍເຖິງ ຜູ້ໃຫ້ບໍລິການທາງດ້ານການເງິນ ຫຼືຜູ້ໃຫ້ເງິນກູ້ຢືມລາຍຍ່ອຍ ໂດຍຮັບເອົາວັດຖຸສິ່ງຂອງ ທີ່ເປັນສັງຫາລິມະຊັບ ມາເປັນຫຼັກຊັບຄ້ຳປະກັນ;
4. **ຜູ້ຊວດຈຳ** ໝາຍເຖິງ ຜູ້ໃຊ້ບໍລິການທາງການເງິນ ຫຼືຜູ້ກູ້ຢືມລາຍຍ່ອຍ ໂດຍມອບວັດຖຸສິ່ງຂອງ ທີ່ເປັນສັງຫາລິມະຊັບ ເປັນຫຼັກຊັບຄ້ຳປະກັນ;
5. **ສັນຍາຊວດຈຳ** ໝາຍເຖິງ ການຕົກລົງເປັນລາຍລັກອັກສອນ ລະຫວ່າງ ຜູ້ຮັບຊວດຈຳ ແລະຜູ້ຊວດຈຳ ຊຶ່ງພາໃຫ້ເກີດສິດ ແລະພັນທະທາງແພ່ງ;
6. **ມູນຄ່າຊວດຈຳ** ໝາຍເຖິງ ມູນຄ່າທີ່ຜູ້ຮັບຊວດຈຳ ແລະຜູ້ຊວດຈຳໄດ້ຕົກລົງກັນໃນສັນຍາຊວດຈຳ;
7. **ໃບອະນຸຍາດດຳເນີນທຸລະກິດ** ໝາຍເຖິງ ເອກະສານອະນຸຍາດໃຫ້ດຳເນີນທຸລະກິດຊວດຈຳ ທີ່ທະນາຄານແຫ່ງ ສປປ ລາວ ອອກໃຫ້;
8. **ເງິນຊວດຈຳ** ໝາຍເຖິງ ຈຳນວນເງິນທີ່ ຜູ້ຮັບຊວດຈຳ ໃຫ້ຜູ້ຊວດຈຳກູ້ຢືມ ຕາມລາຄາຊວດຈຳທີ່ໄດ້ຕົກລົງກັນໄວ້ໃນສັນຍາ.

**ມາດຕາ 4 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ພົວພັນກັບການເຄື່ອນໄຫວຊວດຈຳ ແລະທຸລະກິດຊວດຈຳ ຢູ່ ສປປ ລາວ.

## ພາກທີ II

## ການສ້າງຕັ້ງ ແລະການເຄື່ອນໄຫວຂອງທຸລະກິດຊວດຈຳ

### ໝວດທີ 1

### ການສ້າງຕັ້ງທຸລະກິດຊວດຈຳ

**ມາດຕາ 5 ການສ້າງຕັ້ງທຸລະກິດຊວດຈຳ**

ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ມີຈຸດປະສົງສ້າງຕັ້ງທຸລະກິດຊວດຈຳ ຕ້ອງຍື່ນຄຳຮ້ອງຂໍຂຶ້ນທະບຽນນຳຂະແໜງການອຸດສາຫະກຳ ແລະການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະຕ້ອງໄດ້ຮັບການອະນຸຍາດເຄື່ອນໄຫວທຸລະກິດຊວດຈຳຢ່າງຖືກຕ້ອງ ຈາກທະນາຄານແຫ່ງ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

**ມາດຕາ 6 ເອກະສານປະກອບ**

ເອກະສານປະກອບຂໍສ້າງຕັ້ງ ທຸລະກິດຊວດຈຳ ມີດັ່ງນີ້:

1. ໃບຢັ້ງຢືນທີ່ຢູ່, ສຳເນົາບັດປະຈຳຕົວ ຫຼືສຳເນົາປຶ້ມສຳມະໂນຄົວ;
2. ຊີວະປະຫວັດ ຂອງຜູ້ຂໍສ້າງຕັ້ງ, ຜູ້ຖືຮຸ້ນ ແລະຜູ້ບໍລິຫານ ຕາມແບບພິມຂອງ ທະນາຄານແຫ່ງ ສປປ ລາວ;
3. ໃບແຈ້ງໂທດ;
4. ບົດວິພາກເສດຖະກິດ;
5. ກົດລະບຽບພາຍໃນ;
6. ບັນຊີລາຍຊື່ຜູ້ຖືຮຸ້ນ ແລະສັນຍາສ້າງຕັ້ງວິສາຫະກິດ;
7. ໃບຢັ້ງຢືນການເຄື່ອນໄຫວບັນຊີສຳຮອງ ຈາກທະນາຄານທຸລະກິດ ສອງປີ ຄືນຫຼັງ ສຳລັບນິຕິບຸກຄົນ ແລະການຈັດຕັ້ງ;
8. ແຜນວາດສະຖານທີ່ຕັ້ງ ຂອງໂຮງຊວດຈຳ ທີ່ຂໍສ້າງຕັ້ງ.

### ມາດຕາ 7 ເງື່ອນໄຂ ການສ້າງຕັ້ງທຸລະກິດຊວດຈຳ

ບຸກຄົນທີ່ມີຈຸດປະສົງສ້າງຕັ້ງທຸລະກິດຊວດຈຳ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ຖືສັນຊາດລາວ;
2. ມີວຸດທິການສຶກສາ ຫຼືມີນັກວິຊາການ ລະດັບຊັ້ນສູງຂຶ້ນໄປ;
3. ມີປະສົບການ ຫຼືມີນັກວິຊາການທີ່ມີປະສົບການ ກ່ຽວກັບການເງິນ, ການທະນາຄານ ແລະການບັນຊີຢ່າງໜ້ອຍ ສອງປີ ຂຶ້ນໄປ;
4. ບໍ່ເຄີຍຖືກສານຕັດສິນ ຫຼືພິພາກສາລົງໂທດ ໃນສະຖານການກະທຳຜິດທາງອາຍາ ກ່ຽວກັບການເງິນ, ການທະນາຄານ ເປັນຕົ້ນ ການລັກຊັບ, ການສໍ້ໂກງຊັບ ແລະບໍ່ເຄີຍຖືກຖອນໃບອະນຸຍາດດຳເນີນທຸລະກິດຊວດຈຳ ມາກ່ອນ;
5. ມີຂໍ້ມູນລະອຽດ ກ່ຽວກັບແຫຼ່ງທີ່ມາຂອງເງິນທີ່ຈະນຳມາລົງທຶນ ໃນທຸລະກິດຊວດຈຳ;
6. ມີຖານະການເງິນດີ, ໄດ້ຮັບຄວາມເຊື່ອຖື ແລະເປັນທີ່ຍອມຮັບຂອງປະຊາຊົນ ແລະອົງການປົກຄອງບ້ານ.

### ມາດຕາ 8 ເງື່ອນໄຂ ສຳລັບໂຮງຊວດຈຳ

ສຳລັບໂຮງຊວດຈຳ ຕ້ອງມີເງື່ອນໄຂ ຕົ້ນຕໍ ດັ່ງນີ້:

1. ມີສະຖານທີ່ຕັ້ງ, ອາຄານ ທີ່ເໝາະສົມ ແລະໄດ້ມາດຕະຖານ ເປັນຕົ້ນ ຫ້ອງບໍລິການ, ສາງ ແລະຕູ້ນິລະໄພ ສຳລັບເກັບຮັກສາຊັບຊວດຈຳ ທີ່ສາມາດປ້ອງກັນໄຟໄໝ້ໄດ້ ຢ່າງໜ້ອຍ ສອງຊົ່ວໂມງ ຂຶ້ນໄປ;
2. ມີອຸປະກອນ ແລະເຄື່ອງມືທີ່ຈຳເປັນເພື່ອຮັບປະກັນໃຫ້ແກ່ການດຳເນີນທຸລະກິດຊວດຈຳ.

### ມາດຕາ 9 ທຶນຈົດທະບຽນ

ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດຊວດຈຳ ຕ້ອງມີທຶນຈົດທະບຽນຕ່ຳສຸດ ໜຶ່ງຕື້ ກີບ.

ຜູ້ດຳເນີນທຸລະກິດຊວດຈຳ ສາມາດນຳໃຊ້ທຶນຈົດທະບຽນ ເຂົ້າໃນສອງຈຸດປະສົງ ດັ່ງນີ້:

1. ສ້ອມແປງສຳນັກງານ ແລະປະກອບວັດຖຸເຕັກນິກ ບໍ່ໃຫ້ເກີນ ສິບສ່ວນຮ້ອຍ ຂອງທຶນຈົດທະບຽນ;
2. ເປັນທຶນເຂົ້າໃນການດຳເນີນທຸລະກິດຊວດຈຳ.

## ມາດຕາ 10 ກົດລະບຽບພາຍໃນ

ກົດລະບຽບພາຍໃນ ຂອງທຸລະກິດຊວດຈຳ ນອກຈາກປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ ແລ້ວຍັງຕ້ອງມີເນື້ອໃນເພີ່ມເຕີມ ດັ່ງນີ້:

1. ການຄຸ້ມຄອງ ແລະການເກັບຮັກສາຊັບຊວດຈຳ;
2. ດອກເບ້ຍໃນການຮັບຊວດຈຳ.

ກົດລະບຽບພາຍໃນຂອງ ທຸລະກິດຊວດຈຳ ຈະມີຜົນສັກສິດໄດ້ ກໍຕໍ່ເມື່ອໄດ້ຮັບການຮັບຮອງຈາກ ທະນາຄານແຫ່ງ ສປປ ລາວ. ໃນກໍລະນີມີການປ່ຽນແປງກົດລະບຽບພາຍໃນຂອງ ທຸລະກິດຊວດຈຳ ຕ້ອງໄດ້ຮັບການຮັບຮອງ ຈາກທະນາຄານແຫ່ງ ສປປ ລາວ.

## ມາດຕາ 11 ການປ່ຽນແປງໃບອະນຸຍາດດຳເນີນທຸລະກິດ

ໃນກໍລະນີ ທຸລະກິດຊວດຈຳ ຫາກມີຈຸດປະສົງປ່ຽນແປງເນື້ອໃນໃບອະນຸຍາດດຳເນີນທຸລະກິດຊວດຈຳ ເປັນຕົ້ນ ຂອບເຂດການດຳເນີນທຸລະກິດ, ທຶນຈົດທະບຽນ, ທີ່ຕັ້ງໂຮງຊວດຈຳ ຕ້ອງສະເໜີທະນາຄານແຫ່ງ ສປປ ລາວ ເພື່ອພິຈາລະນາປ່ຽນແປງໃບອະນຸຍາດດຳເນີນທຸລະກິດ.

## ມາດຕາ 12 ການໂຈະ ຫຼືຖອນໃບອະນຸຍາດດຳເນີນທຸລະກິດ

ທະນາຄານແຫ່ງ ສປປ ລາວ ມີສິດໂຈະ ຫຼືຖອນໃບອະນຸຍາດດຳເນີນທຸລະກິດຊວດຈຳ ໃນກໍລະນີ ຜູ້ຮັບຊວດຈຳ ລະເມີດກົດໝາຍ, ລະບຽບການ ແລະດຳລັດວ່າດ້ວຍທຸລະກິດຊວດຈຳ ສະບັບນີ້.

ພາຍຫຼັງໄດ້ຮັບການກ່າວເຕືອນສອງຄັ້ງ ຢ່າງເປັນລາຍລັກອັກສອນ ແມ່ນຈະຖືກໂຈະໃບອະນຸຍາດດຳເນີນທຸລະກິດ.

ພາຍຫຼັງໄດ້ຮັບການກ່າວເຕືອນຄັ້ງທີສາມ ຍັງສືບຕໍ່ກະທຳຜິດ ຈະຖືກຖອນໃບອະນຸຍາດດຳເນີນທຸລະກິດ.

# ໝວດທີ 2
# ການດຳເນີນທຸລະກິດຊວດຈຳ

### ມາດຕາ 13 ສັນຍາຊວດຈຳ

ການເຮັດສັນຍາຊວດຈຳ ຕ້ອງເປັນເງິນກີບ ແລະເປັນລາຍລັກອັກສອນ ບົນພື້ນຖານຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະນອກສັນຍາ ລະຫວ່າງ ຜູ້ຮັບຊວດຈຳ ແລະຜູ້ຊວດຈຳ ແລະມີພະຍານຢັ້ງຢືນ.

### ມາດຕາ 14 ການກຳນົດອັດຕາດອກເບ້ຍ

ອັດຕາດອກເບ້ຍຂອງການຊວດຈຳ ແມ່ນສູງສຸດບໍ່ໃຫ້ເກີນ ສາມສ່ວນຮ້ອຍ ຕໍ່ເດືອນ.

ການຄິດໄລ່ດອກເບ້ຍ ໃຫ້ຄິດໄລ່ເປັນວັນຕາມຈຳນວນວັນຊວດຈຳຕົວຈິງ. ການຊຳລະຕົ້ນທຶນ ແລະດອກເບ້ຍ ໃຫ້ປະຕິບັດຕາມສັນຍາທີ່ໄດ້ຕົກລົງກັນ.

ຜູ້ຮັບຊວດຈຳ ຕ້ອງຕິດປະກາດອັດຕາດອກເບ້ຍ ຂອງຕົນຢູ່ບ່ອນທີ່ເປີດເຜີຍ, ສາມາດເຫັນໄດ້ງ່າຍ ແລະຕ້ອງປະຕິບັດຕາມອັດຕາດອກເບ້ຍທີ່ຕົນປະກາດນັ້ນ ຢ່າງເຂັ້ມງວດ.

### ມາດຕາ 15 ການຕີມູນຄ່າຊັບຊວດຈຳ

ຊັບທີ່ນຳມາຊວດຈຳ ຕ້ອງໄດ້ຮັບການຕີມູນຄ່າ ບົນພື້ນຖານການຕົກລົງເຫັນດີ ລະຫວ່າງຜູ້ຮັບຊວດຈຳ ແລະຜູ້ຊວດຈຳ ເພື່ອກຳນົດລາຄາຊວດຈຳ.

### ມາດຕາ 16 ວົງເງິນຊວດຈຳ

ທຸລະກິດຊວດຈຳ ສາມາດໃຫ້ຜູ້ຊວດຈຳຜູ້ໜຶ່ງ ກູ້ຢືມສູງສຸດບໍ່ໃຫ້ເກີນ ຫ້າສ່ວນຮ້ອຍ ຂອງ ທຶນຈົດທະບຽນທັງໝົດ.

### ມາດຕາ 17 ການປະຕິບັດສັນຍາຊວດຈຳ

ຜູ້ຮັບຊວດຈຳ ແລະຜູ້ຊວດຈຳ ຕ້ອງປະຕິບັດສັນຍາດ້ວຍຄວາມຈິງໃຈ, ຄົບຖ້ວນ ແລະຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

ຜູ້ຊວດຈຳ ຕ້ອງນຳເງິນຕົ້ນທຶນ ລວມທັງດອກເບ້ຍໄປໄຖ່ເອົາຊັບຊວດຈຳຂອງຕົນຄືນພາຍໃນກຳນົດເວລາທີ່ໄດ້ຕົກລົງກັນໄວ້ໃນສັນຍາ.

ຖ້າຜູ້ຊວດຈຳ ບໍ່ໄປໄຖ່ເອົາຊັບຂອງຕົນຄືນຕາມກຳນົດເວລາ ທີ່ບົ່ງໄວ້ໃນສັນຍາແລ້ວ ຜູ້ຮັບຊວດຈຳ ມີສິດເສັ້ງເອົາ ຫຼືຂາຍຊັບຊວດຈຳດັ່ງກ່າວ. ໃນກໍລະນີຊັບຊວດຈຳ ຫາກມີລາຄາສູງກວ່າໜີ້ສິນນັ້ນ ຜູ້ຮັບຊວດຈຳ ຕ້ອງສົ່ງເງິນທີ່ເຫຼືອ ໃຫ້ແກ່ຜູ້ຊວດຈຳ ພາຍຫລັງຫັກຕົ້ນທຶນ, ດອກເບ້ຍ ແລະຄ່າໃຊ້ຈ່າຍທີ່ຈຳເປັນ.

ໃນກໍລະນີຜູ້ຊວດຈຳ ບໍ່ສາມາດໄປໄຖ່ເອົາຊັບຂອງຕົນຄືນຕາມກຳນົດເວລາ ຍ້ອນຄວາມຈຳເປັນເປັນຕົ້ນ ເຈັບເປັນ ຫຼືເກີດເຫດສຸດວິໄສ ຕ້ອງແຈ້ງໃຫ້ຜູ້ຮັບຊວດຈຳຊາບ ກ່ອນໝົດກຳນົດສັນຍາຊວດຈຳໂດຍມີການຢັ້ງຢືນເປັນລາຍລັກອັກສອນ, ແຕ່ຜູ້ຊວດຈຳຕ້ອງໄປໄຖ່ເອົາຊັບຂອງຕົນ ຄືນພາຍໃນ ສິບຫ້າວັນ ພາຍຫຼັງທີ່ຄວາມຈຳເປັນນັ້ນໄດ້ສິ້ນສຸດ. ຜູ້ຮັບຊວດຈຳ ຕ້ອງຢຸດຕິການຄິດໄລ່ດອກເບ້ຍ ໃນ ສິບຫ້າວັນ ຫຼັງສິ້ນສຸດສັນຍານັ້ນ.

## ມາດຕາ 18 ການຂາຍຊັບຊວດຈຳ

ການຂາຍຊັບຊວດຈຳ ຜູ້ຮັບຊວດຈຳ ຕ້ອງແຈ້ງ ໃຫ້ຜູ້ຊວດຈຳຊາບກ່ອນລ່ວງໜ້າ ເຈັດວັນ ເພື່ອໃຫ້ຜູ້ກ່ຽວສາມາດເຂົ້າຮ່ວມໃນການຂາຍຊັບດັ່ງກ່າວ, ຖ້າຜູ້ຊວດຈຳ ຫາກບໍ່ເຂົ້າຮ່ວມ ຜູ້ຮັບຊວດຈຳມີສິດຂາຍຊັບຊວດຈຳນັ້ນ.

ການຂາຍຊັບຊວດຈຳ ຕ້ອງເຮັດບົດບັນທຶກ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ເລກທີ, ວັນທີ, ເດືອນ ແລະປີ ຂອງສັນຍາຊວດຈຳ;
2. ຊື່ ແລະນາມສະກຸນ, ອາຍຸ, ອາຊີບ ແລະທີ່ຢູ່ຂອງຜູ້ຊວດຈຳ;
3. ວັນທີ, ເດືອນ, ປີ ຂາຍຊັບຊວດຈຳ ແລະມູນຄ່າຂອງການຂາຍຊັບຊວດຈຳ;
4. ຊື່, ນາມສະກຸນ ແລະທີ່ຢູ່ຂອງຜູ້ຊື້ຊັບຊວດຈຳ.

ໃນການຂາຍຊັບຊວດຈຳ ທີ່ບໍ່ມີຜູ້ຊວດຈຳເຂົ້າຮ່ວມນັ້ນ ຕ້ອງມີຜູ້ຕາງ ໜ້າອົງການປົກຄອງບ້ານບ່ອນທີ່ໂຮງຊວດຈຳຕັ້ງຢູ່ ຫຼືພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເຂົ້າຮ່ວມນຳ ຕາມແຕ່ລະກໍລະນີ ຂອງມູນຄ່າ, ລັກສະນະ ແລະປະເພດຂອງຊັບຊວດຈຳ.

## ມາດຕາ 19 ການສິ້ນສຸດສັນຍາຊວດຈຳ

ສັນຍາຊວດຈຳ ຈະສິ້ນສຸດໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຄູ່ສັນຍາ ໄດ້ປະຕິບັດສິດ ແລະພັນທະ ຂອງຕົນສຳເລັດຕາມທີ່ໄດ້ຕົກລົງກັນໄວ້ໃນ ສັນຍາຊວດຈຳ;
2. ຄູ່ສັນຍາ ໄດ້ຕົກລົງເຫັນດີຍົກເລີກສັນຍາຊວດຈຳ;
3. ສັນຍາຊວດຈຳ ໝົດກຳນົດ ແລະຄູ່ສັນຍາ ບໍ່ໄດ້ມີການຕົກລົງກັນ ເປັນຢ່າງອື່ນກ່ຽວກັບການຊວດຈຳ.

## ໝວດທີ 3
## ການຮັບ ແລະການຄຸ້ມຄອງຊັບຊວດຈຳ

### ມາດຕາ 20 ການຮັບຊວດຈຳຊັບດ້ວຍຄວາມບໍລິສຸດໃຈ

ໃນກໍລະນີ ຜູ້ຮັບຊວດຈຳ ໄດ້ຮັບຊວດຈຳຊັບໃດໜຶ່ງດ້ວຍຄວາມບໍລິສຸດໃຈ ໂດຍບໍ່ຮູ້ ຫຼືບໍ່ສາມາດຮູ້ໄດ້ວ່າ ຊັບນັ້ນເປັນກຳມະສິດທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ຊວດຈຳ.

ຖ້າເຈົ້າຂອງຊັບເດີມ ຫາກພົບເຫັນຊັບຂອງຕົນຢູ່ໃນໂຮງຊວດຈຳນັ້ນ, ຢາກໄດ້ຊັບນັ້ນຄືນ ຕ້ອງຊຳລະເງິນຊວດຈຳ ພ້ອມດອກເບ້ຍຄືນໃຫ້ຜູ້ຮັບຊວດຈຳຢ່າງຄົບຖ້ວນ. ເຈົ້າຂອງຊັບເດີມ ມີສິດຮ້ອງຟ້ອງເອົາເງິນຈຳນວນທີ່ໄດ້ຈ່າຍໄປແລ້ວນັ້ນ ນຳຜູ້ຊວດຈຳ ແລະແຈ້ງໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ດຳເນີນຄະດີຕາມກົດໝາຍ.

### ມາດຕາ 21 ການຮັບຊວດຈຳຊັບດ້ວຍຄວາມບໍ່ບໍລິສຸດໃຈ

ໃນກໍລະນີ ຜູ້ຮັບຊວດຈຳ ຫາກຮູ້ ຫຼືສາມາດຮູ້ໄດ້ວ່າ ຊັບທີ່ນຳມາຊວດຈຳນັ້ນ ເປັນຊັບທີ່ໄດ້ມາໂດຍບໍ່ຖືກຕ້ອງຕາມກົດໝາຍ ແຕ່ຍັງຮັບຊວດຈຳຊັບດັ່ງກ່າວ ເຈົ້າຂອງຊັບເດີມມີສິດທວງເອົາຊັບຊວດຈຳ ນັ້ນຄືນ ໂດຍບໍ່ມີການໃຊ້ແທນຄ່າເສຍຫາຍໃດໆ ໃຫ້ແກ່ຜູ້ຮັບຊວດຈຳ. ນອກຈາກນີ້, ຜູ້ຮັບຊວດຈຳ ແລະຜູ້ຊວດຈຳ ຍັງຕ້ອງຖືກດຳເນີນຄະດີຕາມກົດໝາຍ ແລະລະບຽບການ.

### ມາດຕາ 22 ການຄຸ້ມຄອງຊັບຊວດຈຳ

ຜູ້ຮັບຊວດຈຳ ຕ້ອງເກັບຮັກສາ ແລະປົກປັກຮັກສາຊັບຊວດຈຳ ໃຫ້ຢູ່ໃນສະພາບເດີມ, ຖ້າຊັບຊວດຈຳ ຫາກເປ່ເພ ຫຼືຕົກເຮ່ຍເສຍຫາຍ ໃນເວລາທີ່ຊັບນັ້ນ ຢູ່ໃນການຄຸ້ມຄອງຂອງຕົນ, ຜູ້ຮັບຊວດຈຳ ຕ້ອງສ້ອມແປງໃຫ້ຢູ່ໃນສະພາບເດີມ ໂດຍແຈ້ງໃຫ້ຜູ້ຊວດຈຳຊາບ ຫຼືໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ.

ຜູ້ຮັບຊວດຈຳ ບໍ່ມີສິດນຳໃຊ້ ແລະໄດ້ຮັບໝາກຜົນຈາກຊັບຊວດຈຳນັ້ນ ເວັ້ນເສຍແຕ່ໄດ້ຕົກລົງກັນໄວ້ໃນສັນຍາ.

## ໝວດທີ 4
## ສິດ ແລະພັນທະ ຂອງຜູ້ຮັບຊວດຈຳ ແລະຜູ້ຊວດຈຳ

### ມາດຕາ 23 ສິດ ຂອງຜູ້ຮັບຊວດຈຳ

ຜູ້ຮັບຊວດຈຳ ມີສິດ ດັ່ງນີ້:

1. ກວດກາຊັບທີ່ນຳມາຊວດຈຳ ກ່ອນການເຮັດສັນຍາຊວດຈຳ;
2. ທວງໃຫ້ຜູ້ຊວດຈຳ ຊຳລະເງິນຊວດຈຳ ພ້ອມດ້ວຍດອກເບ້ຍ;
3. ເສັ້ງເອົາ ຫຼືຂາຍຊັບຊວດຈຳ ເມື່ອໝົດກຳນົດສັນຍາຊວດຈຳ;
4. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະລະບຽບການ.

### ມາດຕາ 24 ພັນທະຂອງຜູ້ຮັບຊວດຈຳ

ຜູ້ຮັບຊວດຈຳ ມີພັນທະ ດັ່ງນີ້:

1. ເກັບຮັກສາ ແລະປົກປັກຮັກສາຊັບຊວດຈຳໃຫ້ຢູ່ໃນສະພາບເດີມ;
2. ບໍ່ຮັບຊວດຈຳຊັບສິນທີ່ບໍ່ຖືກຕ້ອງຕາມກົດໝາຍ;
3. ສົ່ງຄືນຊັບຊວດຈຳ ເມື່ອຜູ້ຊວດຈຳ ໄດ້ຊຳລະເງິນຊວດຈຳ ພ້ອມດ້ວຍດອກເບ້ຍ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ;
4. ສົ່ງເງິນຄືນຕາມມູນຄ່າຊັບຊວດຈຳທີ່ຍັງເຫຼືອຈາກການເສັ້ງເອົາ ຫຼືຂາຍຊັບຊວດຈຳ;
5. ຖືລະບົບບັນຊີວິສາຫະກິດ ຕາມກົດໝາຍວ່າດ້ວຍການບັນຊີ;
6. ລາຍງານການເຄື່ອນໄຫວທຸລະກິດຂອງຕົນ ໃຫ້ທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ;
7. ປະຕິບັດພັນທະດ້ານພາສີ, ອາກອນ, ຄ່າທຳນຽມ ແລະຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະລະບຽບການ ທີ່ກ່ຽວຂ້ອງ;
8. ແຈ້ງໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຊາບ ໃນກໍລະນີພົບເຫັນການເອົາຊັບສິນທີ່ບໍ່ຖືກຕ້ອງຕາມກົດໝາຍ ມາຊວດຈຳ;
9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະລະບຽບການ.

### ມາດຕາ 25 ສິດຂອງຜູ້ຊວດຈຳ

ຜູ້ຊວດຈຳ ມີສິດ ດັ່ງນີ້:

1. ໄດ້ຮັບເງິນຕາມລາຄາຊວດຈຳ ທີ່ໄດ້ຕົກລົງກັນໃນສັນຍາຊວດຈຳ;
2. ທວງເອົາຊັບຊວດຈຳຄືນ ເມື່ອຕົນໄດ້ຊຳລະເງິນຕົ້ນທຶນ ພ້ອມດ້ວຍດອກເບ້ຍ ຄົບຖ້ວນ ຕາມສັນຍາຊວດຈຳ;
3. ທວງໃຫ້ຜູ້ຮັບຊວດຈຳ ໃຊ້ແທນຄ່າເສຍຫາຍຕໍ່ຊັບຊວດຈຳ ຖ້າຊັບຊວດຈຳຫາກເປ່ເພ, ເສັຍຫາຍ ຫຼືບໍ່ຢູ່ໃນສະພາບເດີມ ຊຶ່ງເກີດຈາກຄວາມຜິດພາດຂອງຜູ້ຮັບຊວດຈຳ;
4. ທວງເອົາເງິນເພີ່ມຕື່ມຈາກມູນຄ່າເກີນຈາກການເສັ້ງເອົາ ຫຼືຂາຍຊັບຊວດຈຳ;
5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະລະບຽບການ.

### ມາດຕາ 26 ພັນທະຂອງຜູ້ຊວດຈຳ

ຜູ້ຊວດຈຳ ມີພັນທະ ດັ່ງນີ້:

1. ມອບຊັບຊວດຈຳ ໃຫ້ຜູ້ຮັບຊວດຈຳ ຄຸ້ມຄອງ ແລະເກັບຮັກສາ;
2. ຊຳລະເງິນຊວດຈຳ ພ້ອມດ້ວຍດອກເບ້ຍ ໃຫ້ຄົບຖ້ວນ ແລະຖືກຕ້ອງຕາມກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ;
3. ບໍ່ເອົາຊັບສິນທີ່ບໍ່ຖືກຕ້ອງຕາມກົດໝາຍ ມາຊວດຈຳ;
4. ທົດແທນເງິນຄືນໃຫ້ຜູ້ຮັບຊວດຈຳ ໃນກໍລະນີມູນຄ່າຊັບຊວດຈຳບໍ່ພຽງພໍໃນການໃຊ້ແທນ ໜີ້ສິນ ໃນເວລາມີການເສັ້ງເອົາ ຫຼືຂາຍຊັບຊວດຈຳ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະລະບຽບການ.

## ໝວດທີ 5
## ການຍຸບເລີກທຸລະກິດຊວດຈຳ

### ມາດຕາ 27 ສາເຫດຂອງການຍຸບເລີກ

ທຸລະກິດຊວດຈຳ ຈະຖືກຍຸບເລີກ ດ້ວຍສາເຫດໃດໜຶ່ງ ດັ່ງນີ້:

1. ເຈົ້າຂອງທຸລະກິດຊວດຈຳ ຕົກລົງຍຸບເລີກດ້ວຍຄວາມສະໝັກໃຈ ຫຼືມີມະຕິກອງປະຊຸມ ຜູ້ຖືຮຸ້ນໃຫ້ຍຸບເລີກ;

2. ເຈົ້າຂອງທຸລະກິດຊວດຈຳ ເສຍຊີວິດ ຫຼືຂາດຄວາມສາມາດທາງດ້ານການປະພຶດ ໂດຍບໍ່ມີຜູ້ສືບທອດ;
3. ທະນາຄານແຫ່ງ ສປປ ລາວ ຖອນໃບອະນຸຍາດດຳເນີນທຸລະກິດ;
4. ສານຕັດສິນໃຫ້ຍຸບເລີກ ຫຼືລົ້ມລະລາຍ.

### ມາດຕາ 28 ການຍຸບເລີກ

ການຍຸບເລີກທຸລະກິດຊວດຈຳ ຕາມສາເຫດທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂອງດຳລັດສະບັບນີ້ ໃຫ້ປະຕິບັດຕາມຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າ ດ້ວຍການລົ້ມລະລາຍຂອງວິສາຫະກິດ, ກົດໝາຍ ແລະລະບຽບການອື່ນ ທີ່ກ່ຽວຂ້ອງ.

## ພາກທີ III
## ຂໍ້ຫ້າມ

### ມາດຕາ 29 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດຊວດຈຳ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງ ຫຼືນຳໃຊ້ໃບອະນຸຍາດຂອງຜູ້ອື່ນ;
2. ປອມແປງໃບອະນຸຍາດ ຫຼືໃຫ້ສິນບົນ ແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອໃຫ້ໄດ້ໃບອະນຸຍາດດຳເນີນທຸລະກິດຊວດຈຳ;
3. ຂັດຂວາງ, ບໍ່ອຳນວຍຄວາມສະດວກ, ບໍ່ໃຫ້ການຮ່ວມມືໃນການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ແລະພະນັກງານ ທີ່ກ່ຽວຂ້ອງ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະລະບຽບການ.

### ມາດຕາ 30 ຂໍ້ຫ້າມ ສຳລັບຜູ້ດຳເນີນທຸລະກິດຊວດຈຳ

ຫ້າມຜູ້ດຳເນີນທຸລະກິດຊວດຈຳ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດອື່ນ ທີ່ບໍ່ໄດ້ຮັບອະນຸຍາດ;
2. ຮັບຊວດຈຳ ຊັບສິນຂອງລັດ, ລວມໝູ່ ແລະຂອງບຸກຄົນອື່ນທີ່ບໍ່ໄດ້ຮັບມອບສິດ;
3. ຮັບຊວດຈຳ ອາວຸດເສິກ, ທາດລະເບີດ, ທາດເບື່ອທຸກຊະນິດ, ວັດຖຸເຖືອດຫ້າມ ແລະທຸກຊັບສິນທີ່ບໍ່ຖືກຕ້ອງຕາມກົດໝາຍ ຕາມການກຳນົດ ຂອງຂະແໜງການ ທີ່ກ່ຽວຂ້ອງ;
4. ເອົາດອກເບ້ຍ ທີ່ຜູ້ຊວດຈຳຄ້າງຊຳລະ ມາຄິດໄລ່ເປັນລາຄາຊວດຈຳ;

5. ນຳໃຊ້ ແລະໄດ້ຮັບໝາກຜົນ ຈາກຊັບຊວດຈຳ;
6. ປ່ຽນແທນຊັບຊວດຈຳ ດ້ວຍຊັບສິ່ງຂອງອື່ນ ທີ່ມີລັກສະນະ, ຮູບຮ່າງ, ຂະໜາດ ແລະປະເພດດຽວກັນກັບຊັບຊວດຈຳ;
7. ນອກຈາກດອກເບ້ຍແລ້ວ ຜູ້ຮັບຊວດຈຳ ບໍ່ມີສິດເກັບລາຍຮັບຄ່າບໍລິການອື່ນ ນຳຜູ້ຊວດຈຳອີກ ລວມທັງ ຄ່າຝາກຊັບຊວດຈຳ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະລະບຽບການ.

**ມາດຕາ 31 ຂໍ້ຫ້າມ ສຳລັບເຈົ້າໜ້າທີ່ ແລະພະນັກງານ ທີ່ກ່ຽວຂ້ອງຂອງລັດ**

ຫ້າມເຈົ້າໜ້າທີ່ ແລະພະນັກງານ ທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ, ເປັນພະນັກງານວິຊາການ ໃຫ້ທຸລະກິດຊວດຈຳ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;
2. ເປີດເຜີຍຂໍ້ມູນກ່ຽວກັບທຸລະກິດຊວດຈຳ;
3. ທວງເອົາ, ຂໍເອົາ, ຮັບສິນບົນ, ລຳອຽງ, ກົດໜ່ວງ ຖ່ວງດຶງ, ສົມຮູ້ຮ່ວມຄິດ, ປອມແປງເອກະສານ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດຂອງຕົນ, ຄອບຄົວ, ຍາດພີ່ນ້ອງ ຫຼືເພື່ອນຝູງ;
4. ເມີນເສີຍ ຕໍ່ຄວາມຮັບຜິດຊອບຂອງຕົນ ຫຼືຕໍ່ພຶດຕິກຳທີ່ບໍ່ຖືກຕ້ອງຂອງຜູ້ດຳເນີນທຸລະກິດຊວດຈຳ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະລະບຽບການ.

## ພາກທີ IV
## ການຄຸ້ມຄອງ ແລະການກວດກາ ວຽກງານທຸລະກິດຊວດຈຳ

**ມາດຕາ 32 ອົງການຄຸ້ມຄອງ ແລະກວດກາ**

ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການຮັບຜິດຊອບໂດຍກົງໃນການຄຸ້ມຄອງ ແລະກວດກາທຸລະກິດຊວດຈຳ ຢ່າງລວມສູນ ແລະເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມີການປະສານສົມທົບກັບບັນດາກະຊວງ, ຂະແໜງການ ແລະອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

**ມາດຕາ 33 ສິດ ແລະໜ້າທີ່ ຂອງທະນາຄານແຫ່ງ ສປປ ລາວ**

ໃນການຄຸ້ມຄອງທຸລະກິດຊວດຈຳ ທະນາຄານແຫ່ງ ສປປ ລາວ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະສ້າງນິຕິກຳ ກ່ຽວກັບການຊວດຈຳ ເພື່ອນຳສະເໜີລັດຖະບານ ພິຈາລະນາ ພ້ອມທັງຄົ້ນຄວ້າ ແລະອອກລະບຽບການ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ;
2. ໂຄສະນາເຜີຍແຜ່, ຊີ້ນຳ ແລະຊຸກຍູ້ ການຈັດຕັ້ງປະຕິບັດກົດໝາຍ ແລະລະບຽບການ ກ່ຽວກັບການຊວດຈຳ ໃນຂອບເຂດທົ່ວປະເທດ;
3. ຄຸ້ມຄອງ, ຕິດຕາມ ແລະກວດກາ ການເຄື່ອນໄຫວ ແລະການດຳເນີນທຸລະກິດຊວດຈຳ;
4. ພິຈາລະນາຄົ້ນຄວ້າ ອອກ, ໂຈະ ຫຼືຖອນ ໃບອະນຸຍາດດຳເນີນທຸລະກິດຊວດຈຳ;
5. ສອບຖາມ, ກວດກາເອກະສານທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ, ສະຖານທີ່ ແລະວິທີເກັບຮັກສາຊັບຊວດຈຳ;
6. ນຳໃຊ້ມາດຕະການ ຕໍ່ທຸລະກິດຊວດຈຳ ທີ່ລະເມີດກົດໝາຍ ແລະລະບຽບການ ກ່ຽວກັບການຊວດຈຳ;
7. ກໍ່ສ້າງ ແລະບຳລຸງບຸກຄະລາກອນ ດ້ານວິຊາການ ກ່ຽວກັບການຊວດຈຳ;
8. ສະຫຼຸບ ແລະລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ລັດຖະບານຊາບຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະລະບຽບການ.

### ມາດຕາ 34 ສິດ ແລະໜ້າທີ່ຂອງຂະແໜງການ ແລະພາກສ່ວນອື່ນ ທີ່ກ່ຽວຂ້ອງ

ຂະແໜງການ ແລະພາກສ່ວນອື່ນທີ່ກ່ຽວຂ້ອງ ມີສິດ ແລະໜ້າທີ່ ໃຫ້ການຮ່ວມມື ແລະປະສານສົມທົບກັບທະນາຄານແຫ່ງ ສປປ ລາວ ກ່ຽວກັບການຄຸ້ມຄອງ ແລະກວດກາທຸລະກິດຊວດຈຳ ແລະການດຳເນີນທຸລະກິດຊວດຈຳ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ, ນຳໃຊ້ສິດ ແລະປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະລະບຽບການ.

### ມາດຕາ 35 ຮູບການກວດກາ

ການກວດກາທຸລະກິດຊວດຈຳ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຢ່າງເປັນປົກກະຕິ ຊຶ່ງແມ່ນການກວດກາ ທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າ ມີຄວາມຈຳເປັນ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ, ບໍ່ໄດ້ແຈ້ງໃຫ້ທຸລະກິດຊວດຈຳ ຊາບລ່ວງໜ້າ.

ໃນການດຳເນີນການກວດກາທຸລະກິດຊວດຈຳນັ້ນ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະລະບຽບການ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

### ມາດຕາ 36 ເນື້ອໃນຂອງການກວດກາ

ເນື້ອໃນຂອງການກວດກາທຸລະກິດຊວດຈຳ ມີ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະລະບຽບການ;
2. ການດຳເນີນທຸລະກິດຊວດຈຳ ເປັນຕົ້ນ ການຄຸ້ມຄອງບໍລິຫານ, ການບັນຊີ ແລະການເງິນ, ມາດຕະຖານທຸລະກິດຊວດຈຳ, ການເກັບຮັກສາຊັບຊວດຈຳ ແລະສັນຍາຊວດຈຳ.

### ມາດຕາ 37 ການລາຍງານ

ທຸລະກິດຊວດຈຳ ຕ້ອງລາຍງານການເຄື່ອນໄຫວທຸລະກິດຂອງຕົນ ໃຫ້ແກ່ ທະນາຄານແຫ່ງ ສປປ ລາວ ປະຈຳເດືອນ, ສາມເດືອນ, ຫົກເດືອນ ແລະປະຈຳປີ ຕາມແບບພິມລາຍງານທີ່ ທະນາຄານແຫ່ງ ສປປ ລາວ ກຳນົດຕາມແຕ່ລະໄລຍະ.

## ພາກທີ V
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 38 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ມີຜົນງານໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ຄຸ້ມຄອງທຸລະກິດຊວດຈຳ ຢ່າງມີຄຸນນະພາບ, ດຳເນີນທຸລະກິດຊວດຈຳຖືກຕ້ອງຕາມກົດໝາຍ ແລະລະບຽບການ ຈະໄດ້ຮັບການຍ້ອງຍໍ ຫຼືປະຕິບັດນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 39 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29, 30 ແລະມາດຕາ 31 ຂອງດຳລັດສະບັບນີ້ ຈະຖືກ ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼືລົງໂທດ ທາງອາຍາ ຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼືໜັກ.

## ພາກທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 40 ການຈັດຕັ້ງປະຕິບັດ**

ມອບໃຫ້ທະນາຄານແຫ່ງ ສປປ ລາວ ເປັນຜູ້ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 41 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍໂຮງຊວດຈຳ ສະບັບເລກທີ 10/ນຍ, ລົງວັນທີ 02 ກຸມພາ 2002.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະບານແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ